สาทาละนะลัด ปะຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ເລກທີ 01 ສປປ

ລົງວັນທີ------

# ລັດຖະບັນຍັດ

# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ວ່າດ້ວຍການດັດແກ້ອັດຕາອາກອນຕົວເລກທຸລະກິດ,
ອາກອນລາຍໄດ້ຈາກຄ່າເຊົ່າ, ອາກອນຕ່ຳສຸດ, ອາກອນຊົມໃຊ້ເກົ່າ
ແລະ ເພີ່ມອັດຕາອາກອນຊົມໃຊ້ໃຫມ່ຈາກສິນຄ້າເຄື່ອງ
ຂອງບາງປະເພດ.

---

- ອີງຕາມລັດຖະທຳມະນູນແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໝວດທີ V ມາດຕາ 53 ຂໍ້ 2 ;

- ອີງຕາມມະຕິຕົກລົງຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 08/ຄປຈ ລົງວັນທີ 25 ພຶດສະພາ 1998 ວ່າດ້ວຍການດັດແກ້ອັດຕາອາກອນຕົວເລກທຸລະກິດ, ອາກອນລາຍໄດ້ຈາກຄ່າເຊົ່າ, ອາກອນຕ່ຳສຸດ,ອາກອນຊົມໃຊ້ເກົ່າ ແລະເພີ່ມອັດຕາອາກອນຊົມໃຊ້ໃຫມ່ ຈາກສິນຄ້າເຄື່ອງຂອງບາງປະເພດ.

- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 05/ຄປຈ ລົງວັນທີ 25 ພຶດສະພາ 1998. ກ່ຽວກັບການສະເໜີອອກລັດຖະບັນຍັດ ວ່າດ້ວຍການດັດແກ້ອັດຕາອາກອນຕົວເລກທຸລະກິດ, ອາກອນລາຍໄດ້ຈາກຄ່າເຊົ່າ, ອາກອນຕ່ຳສຸດ, ອາກອນຊົມໃຊ້ເກົ່າ ແລະ ເພີ່ມອັດຕາອາກອນຊົມໃຊ້ໃຫມ່ ຈາກສິນຄ້າເຄື່ອງຂອງບາງປະເພດ.

*ປະທານປະເທດ*

*ສາທາລະນະລັດປະຊາທິປະໄຕປະຊາຊົນລາວ ອອກລັດບັນຍັດ :*

*ມາດຕາ 1* : ດັດແກ້ອັດຕາອາກອນຕົວເລກທຸລະກິດ ໃນມາດຕາ 12 ຂໍ້ ( ກ ) ຂໍ້ ( ຂ ) ຫຍໍ້ໜ້າ 1 ແລະ 2 ໃນອັດຕາ 3% ແລະ 5% ມາເພີ່ມເຂົ້າໃສ່ໃນມາດຕາ 12 ຂໍ້ ( ຂ ) ແລະ( ຄ )

*ມາດຕາ 3* : ເພີ່ມລາຍການຍົກເວັ້ນອາກອນຕົວເລກທຸລະກິດ ສຳລັບເຂົ້າສານ, ຮົາ, ປຸຍ, ອາຫານສັດ, ລົດຮັບໃຊ້ຄົນພິການ ( ເສຍອົງຄະ ) ແລະ ລົດດັບເພີງ ເຂົ້າໃສ່ມາດຕາ 9 ຂອງກົດໝາຍ.

*ມາດຕາ 4* : ດັດແກ້ອາກອນລາຍໄດ້ ຈາກຄ່າເຊົ່າໃນມາດຕາ 38 ຂໍ້ 1 ຂີດໜ້າ 2 ສະເພາະແຕ່ລາຍໄດ້ ຈາກການໃຫ້ເຊົ່າທີ່ດິນ, ເຮືອນ ຫຼື ຊັບອື່ນໆ ຂອງບຸກຄົນທີ່ຖືກເສຍອາກອນ ຕາມອັດຕາທະວີຄູນ ມາເປັນອັດຕາຫຼຸບຖານ 30% ແລະ 25% ສຳລັບເຮືອນໃຫ້ຄົນພາຍໃນເຊົ່າແຕ່ລະປະເພດເຮືອນ, ສຳລັບເຮືອນໃຫ້ຄົນຕ່າງປະເທດເຊົ່າ ຕ້ອງເສຍອາກອນລາຍໄດ້ເປັນເງິນໂດລາ ເກັບເປັນຕາແມັດ ($m^2$) ແຕ່ 2 ໂດລາ, 1,7 ໂດລາ, 1,2 ໂດລາ, 1 ໂດລາ/ຕາແມັດ/ເດືອນ, ແຕ່ລະປະເພດເຮືອນ.

*ມາດຕາ 5* : ດັດແກ້ອັດຕາອາກອນຕ່ຳສຸດ ໃນມາດຕາ 55 ໄດ້ກຳນົດໄວ້ 0,50% ເພີ່ມຂຶ້ນເປັນ 1%.

*ມາດຕາ 6* : ດັດແກ້ອັດຕາອາກອນຊົມໃຊ້ເກົ່າ ແລະ ເພີ່ມອັດຕາອາກອນຊົມໃຊ້ໃໝ່ ໃສ່ມາດຕາ 23 ຈາກການນຳເຂົ້າ, ການຂາຍ ແລະ ການບໍລິການ ມີດັ່ງນີ້ :

| ລ/ດ | ເ ນື້ ອ ໃ ນ | ອັດຕາເກົ່າ | ສະເໜີອັດຕາໃໝ່ |
|---|---|---|---|
| 1 | *ນ້ຳມັນເຊື້ອໄຟ :* | | |
| | - ນ້ຳມັນແອັດຊັງພິເສດ | 23% | 23% |
| | - ນ້ຳມັນແອັດຊັງ ທຳມະດາ | 20% | 24% |
| | - ນ້ຳມັນກາຊວນ | 10% | 12% |
| | - ນ້ຳມັນກາດຍົນ | 10% | 10% |
| | - ນ້ຳມັນເຄື່ອງ, ນ້ຳມັນໄຮໂດລິກ, ນ້ຳມັນໝຽວ, ນ້ຳມັນຫ້າມລໍ້. | 2% | 5% |
| 2 | ເຫລົ້າ ຫຼື ເຄື່ອງດື່ມທີ່ມີທາດເຫລົ້າ : | 40% | 60% |
| | - ເຫລົ້າ ຫຼື ເຄື່ອງດື່ມທຸກຊະນິດທີ່ມີທາດເຫລົ້າ ແຕ່ 15 ອົງສາ ຂຶ້ນໄປ; | | |
| | - ເຫລົ້າເບຍ, ເຫລົ້າແວງ ແລະ ເຄື່ອງດື່ມອື່ນໆທີ່ມີທາດເຫລົ້າ ຕ່ຳກວ່າ 15 ອົງສາ. | 30% | 50% |
| 3 | ນ້ຳອັດລົມ ແລະ ເຄື່ອງດື່ມ ເພື່ອບຳລຸງກຳລັງ | 20% | 30% |
| 4 | ຢາສູບ ສຳເລັດຮູບເປັນເສັ້ນ, ເປັນຊອງ ແລະ ຢາຊິກາ | 30% | 50% |
| 5 | ນ້ຳຫອມ ແລະ ເຄື່ອງເສີມສວຍ | 10% | 20% |
| 6 | ໄພ້ ແລະ ປະເພດໃກ້ຄຽງ, ໝາກກະໂພກ, ບັ້ງໄປດອກໄມ້ໄຟ | 50% | 70% |
| 7 | ລົດຕູ້ ທຸກປະເພດ | 14% | 20% |
| 8 | ລົດເກງ ແຕ່ 1.000 ເຊເຊ ລົງມາ | 51% | 60% |
| 9 | ລົດເກງ ແຕ່ 1.000 - 1.500 ເຊເຊ | 51% | 62% |
| 10 | ລົດເກງ ແຕ່ 1.500 - 3.000 ເຊເຊ. | 60% | 72% |
| 11 | ລົດເກງ 3.000 ເຊເຊ ຂຶ້ນໄປ | 92% | 104% |

| | | | |
|---|---|---|---|
| 13 | ລົດກະບະ 4 ປະຕູ, 4 ປະຕູເຄິ່ງ ສູງຫຼືຕ່ຳ. | 14% | 30% |
| 14 | ລົດກະບະ 2 ປະຕູ, 2 ປະຕູເຄິ່ງ ສູງຫຼືຕ່ຳ. | 12% | 25% |
| 15 | ລົດຈັກແຕ່ 250 ເຊເຊ ຫາ 500 ເຊເຊ. | 30% | 50% |
| 16 | ລົດຈັກແຕ່ 500 ເຊເຊ ຫາ 800 ເຊເຊ. | 30% | 50% |
| 17 | ລົດຈັກແຕ່ 800 ເຊເຊ ຂຶ້ນໄປ | 30% | 50% |
| 18 | ເຄື່ອງໄຟຟ້າຄື : ຕູ້ແຊ່ເຢັນ, ເຄື່ອງເຮັດນ້ຳອຸ່ນ, ເຄື່ອງຈັກຊັກຜ້າ. ເຄື່ອງດູດຝຸ່ນ, ເຄື່ອງອາຍເຢັນ, ໂທລະທັດສີ, ເຄື່ອງຫຼິ້ນວີດີໂອ, ກ້ອງຖ່າຍວີດີໂອ ແລະ ເຄື່ອງປະກອບດັ່ງກ່າວ, ກ້ອງຖ່າຍຮູບ ແລະ ອຸປະກອນ. | 5% | 12% |

*<u>ມາດຕາ 7</u>* : ເພີ່ມລາຍການສິນຄ້າເຄື່ອງຂອງທີ່ຕ້ອງເສຍອາກອນຊົມໃຊ້ ເຂົ້າໃນການມາດຕາ 20 ແລະ ເພີ່ມອັດຕາອາກອນຊົມໃຊ້ໃໝ່ ໃສ່ມາດຕາ 23 ຈາກການນຳເຂົ້າ, ການຂາຍ ຫຼື ການບໍລິການ ມີດັ່ງນີ້ :

1. ລົດບັດ........................................................................................ 15%
2. ລົດບັນທຸກ ທຸກປະເພດ ............................................................... 10%
3. ລົດຈັກ ທຸກປະເພດ ................................................................... 50%
4. ອາວຸດລ່າເນື້ອ ທຸກຊະນິດ ............................................................ 10%
5. ໂຕະບິລຽດ ຫຼື ສະນຸກເກີ, ໂຕະບານເຕະແລະຕູ້ເຄື່ອງຫຼິ້ນເກມອື່ໆ .............. 10%
6. ກິດຈະການບັນເທີງ ເຊັ່ນ: ໂຮງເຕັ້ນລຳ, ດິສໂກເທັກ ຄາລາໂອເກະ ........... 10%
7. ກິດຈະການສະນຸກເກີ ຫຼື ບິລຽດ, ໂບລິ້ງ ............................................. 10%
8. ກິດຈະການຫວຍພັດທະນາ .............................................................. 10%

*<u>ມາດຕາ 8</u>* : ມອບໃຫ້ລັດຖະບານເປັນຜູ້ແນະນຳ ແລະ ຈັດຕັ້ງປະຕິບັດ ລັດຖະບັນຍັດສະບັບນີ້.

*<u>ມາດຕາ 9</u>* : ລັດຖະບັນຍັດສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ວຽງຈັນ, ວັນທີ ໒໘ ກັນຍາ 1998.

ປະທານປະເທດ